**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0630 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 19/03/2019

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ

ທີ່ນັບຖື

ເລື້ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2019

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2019 ວັນທີ 18 ມີນາ 2019, ມີລາຍລະອຽດລຸ່ມນີ້:

1. ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2018 ລວມທັງບົດລາຍງານການເງິນຂອງບໍລິສັດ ປີ 2018 ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ກວດສອບແລ້ວ ແລະໃຫ້ນຳເລື້ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ເພື່ອພິຈາລະນາຮັບຮອງ.
2. ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດຂອງບໍລິສັດ 6 ເດືອນທ້າຍປີ 2018 (01/07/2018-31/12/2018) ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ແລະຈາກເງິນສະສົມໄວ້ໃນຊຸມປີຜ່ານມາ ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 24 ເມສາ 2019 ໃນອັດຕາ 160 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດປະມານ 268,68 ຕື້ກີບ ແລະກຳນົດວັນຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ໃນວັນທີ 9 ພຶດສະພາ 2019 ແລະໃຫ້ນຳເລື້ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ເພື່ອພິຈາລະນາອະນຸມັດ.
3. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018, ມີລາຍລະອຽດດັ່ງນີ້:
   - ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີຜ່ານມາ ເພື່ອຊາບ.
   - ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017.
   - ວາລະທີ3: ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2018(01/01/2018-30/06/2018) ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018.
   - ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານການດຳເນີນທຸລະກິດ ຂອງບໍລິສັດປີ 2018 ລວມທັງລາຍງານການເງິນຂອງບໍລິສັດປີ 2018 ແລະແຜນການດຳເນີນທຸລະກິດຂອງບໍລິສັດປີ 2019.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ວາລະທີ 5: ພິຈາລະນາ ແລະອະນຸມັດການຈ່າຍເງິນປັນຜົນ 6 ເດືອນທ້າຍປີ 2018 (01/07/2018-31/12/2018) ແລະ ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການໄດ້ຮັບເງິນປັນຜົນ 6 ເດືອນທ້າຍປີ 2018.

ວາລະທີ 6: ພິຈາລະນາແລະ ຮັບຮອງການຄັດເລືອກຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຜູ້ກວດສອບບັນຊີພາຍນອກປີ 2019.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

<u>ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່</u>

ລັດຕະນາ ປະທຸມວັນ